## ເປັນຫຍັງຕ້ອງປົກປ້ອງເດັກແລະແມ່ຍິງ ?

ວຽກງານປົກປ້ອງເດັກຖືກກຳນົດໄວ້ກົດໝາຍວ່າດ້ວຍການປົກປ້ອງສິດແລະຜົນປະໂຫຍດຂອງເດັກປີ 2007 ໃນກົດໝາຍສະບັບນີ້ລັດຖະບານໄດ້ລະບຸເຖິງເປົ້າໝາຍໃນການຂະຫຍາຍຕາໜ່າງວຽກງານປົກປ້ອງເດັກໄປສູ່ທຸກບ້ານໃນຂອບເຂດທົ່ວປະເທດນອກຈາກນັ້ນຍັງມີກົດໝາຍອື່ນໆທີ່ກ່ຽວຂ້ອງເຊັ່ນ:

- ກົດໝາຍອາຍາມາດຕາ 134.
- ກົດໝາຍວ່າດ້ວຍການພັດທະນາແລະປົກປ້ອງແມ່ຍິງ.
- ກົດໝາຍແຮງງານ.
- ສົນທິສັນຍາຂອງອົງການສະຫະປະຊາຊາດວ່າດ້ວຍການຕ້ານອາດສະຍາກຳຂ້າມຊາດທີ່ມີການຈັດຕັ້ງແລະອານຸສັນຍາເພື່ອສະກັດກັ້ນ,ຕໍ່ຕ້ານການຄ້າມະນຸດ,



ADB
Asian Development Bank

LAOS



## ລະວັງການຄ້າມະນຸດ ເປັນອາຊະຍາກຳຮ້າຍແຮງມັນກະທົບຕໍ່ຊີວິດຂອງພວກເຈົ້າ



## ກຸ່ມເປົ້າໝາຍ:

ການປົກປ້ອງແມ່ຍິງ ແລະ ເດັກນ້ອຍສ້າງຂື້ນເພື່ອໃຫ້ການຊ່ວຍເຫຼືອແມ່ຍິງ ແລະດັກນ້ອຍ ທີ່ຕ້ອງການປົກປ້ອງທີ່ມີຄວາມສ່ຽງ ຫຼື ເປັນຜູ້ຖືກເຄາະຮ້າຍຈາກການທາລຸນ, ການປ່ອຍ ປະລະເລີຍ, ການຂູດຮີດແຮງງານ, ການບັນຂັບໃຫ້ຂາຍໂສເພນີ, ການຈຳແນກ, ການການໃຊ້ຄວາມຮຸນແຮງ

## ຂໍ້ຄວນລະວັງ :

- ມີຄົນສັກຊວນທ່ານໄປເຮັດວຽກຢູ່ຕ່າງປະເທດໃຫ້ສັນຍາກັບທ່ານວ່າຈະຫາວຽກທີ່ດີໆໃຫ້ ແລະ ມີລາຍຮັບດີ
- ສ້າງຄວາມລື້ງເຄີຍ,ເອົາຂອງຕ້ອນມາໃຫ້, ທີ່ຢູ່ ເບີໂທ ແລະ ແນະນຳທ່ານກ່ຽວກັບເຮັດວຽກຕ່າງໆງນາໆ.
- ຈ່າຍເງິນໃຫ້ພໍ່ແມ່ ຫຼື ຜູ້ປົກຄອງລ່ວງໜ້າແລ້ວ ກໍ່ພາທ່ານ ໄປນຳເລີຍ.
- ອ້າງຕົນວ່າເປັນຄົນຊອກວຽກໃຫ້ຫຼາຍຄົນມາແລ້ວ ແລະ ແຕ່ລະຄົນຮັ່ງມີຂຶ້ນຖ້າບໍ່ເຊື່ອກໍ່ໃຫ້ໄປຖາມຜູ້ທີໄປແລ້ວ.
- ຢ່າມອບໜັງສືເດີນທາງ, ບັດປະຈຳຕົວ ແລະ ເອກະສານອື່ນໆທີ່ສຳຄັນໃຫ້ຄົນອື່ນເດັດຂາດ.
- ທ່ານຈົ່ງຢ່າງເຊື່ອໃຈເຖິງວ່າຈະແມ່ນເພື່ອນຮັກ ຫຼື ວ່າພີ່ນ້ອງກໍ່ຕາມ ຍ້ອນເຫັນແກ່ເງິນບຸກຄົນເລົ່ານີ້ອາດເປັນຜູ້ຫຼອກລວງພາທ່ານໄປຂາຍໃຫ້ຄົນອື່ນ.

## ເບີໂທຕິດຕໍ່,ສາຍດ່ວນ:

ສະຫະພັນແມ່ຍິງ 136

## ຄະນະຈຸດປະສານງານແຕ່ລະຂັ້ນ

- ຂັ້ນບ້ານ: ນາຍບ້ານ, ຮອງນາຍບ້ານ

- ສະຫະພັນແມ່ຍັງບ້ານ

## ຫ້ອງການປົກຄອງເມືອງ:

- ແນວລາວສ້າງຊາດ
- ສະຫະພັນແມ່ຍິງເມືອງ

## ຫ້ອງວ່າການປົກຄອງແຂວງ:

- ແນວລາວສ້າງຊາດ
- ສະຫະພັນແມ່ຍິງແຂວງ